**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ | ເລກທີ 122 /ລບ
ນະຄອນຫຼວງວຽງຈັນ, ວັນທີ 20 / 05 / 26

# ດຳລັດ
# ວ່າດ້ວຍກະສິກຳສະອາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການປູກຝັງ ສະບັບເລກທີ 84/ສພຊ, ລົງວັນທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 1275/ກສ, ລົງວັນທີ 27 ມີນາ 2026.

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານກະສິກຳສະອາດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ຮັບປະກັນໃຫ້ພືດ ແລະ ຜະລິດຕະພັນພືດ ມີຄຸນນະພາບ, ສະອາດ, ປອດໄພ ຕໍ່ສຸຂະພາບ, ຊີວິດ ຂອງຄົນ ແລະ ສັດ, ເປັນມິດກັບສິ່ງແວດລ້ອມ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດສະອາດ, ສີຂຽວ ແລະ ຍືນຍົງ.

**ມາດຕາ 2 ກະສິກຳສະອາດ**

ກະສິກຳສະອາດ ແມ່ນ ລະບົບການຜະລິດກະສິກຳ ແລະ ການເກັບກ່ຽວຜົນຜະລິດຈາກທຳມະຊາດ ທີ່ມີການຢັ້ງຢືນ ຄຸນນະພາບ, ຄວາມສະອາດ, ມີຄວາມປອດໄພ ຕໍ່ ຜູ້ຜະລິດ, ຜູ້ບໍລິໂພກ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຜະລິດກະສິກຳສະອາດ** ໝາຍເຖິງ ການດຳເນີນກິດຈະການກະສິກຳສະອາດ ເລີ່ມແຕ່ຂອດການຜະລິດ, ການປຸງແຕ່ງ ຈົນເຖິງການບໍລິການ;

2. **ຜູ້ປະກອບການ** ໝາຍເຖິງ ຜູ້ດຳເນີນການຜະລິດກະສິກຳ, ເກັບກ່ຽວ, ປຸງແຕ່ງ ແລະ ຈຳໜ່າຍ ຜົນຜະລິດກະສິກຳ, ຂາຍສົ່ງ-ຂາຍຍ່ອຍ, ເກັບຊື້, ສົ່ງອອກ, ນຳເຂົ້າ ແລະ ຜະລິດ ປັດໄຈການຜະລິດ ລວມທັງ ຜູ້ດຳເນີນທຸລະກິດກ່ຽວກັບກະສິກຳສະອາດ;

3. **ການຕັດແຕ່ງພັນທຸກຳ (GMOs: Genetically Modified Organisms)** ໝາຍເຖິງ ສິ່ງທີ່ມີຊີວິດ ທີ່ເກີດຈາກການຕັດຕໍ່, ສ້າງຄຸນລັກສະນະດ້ານພັນທຸກຳອັນໃໝ່ ດ້ວຍການນຳໃຊ້ເຕັກນິກ ແລະ ການເຊື່ອມຕໍ່ຈຸລັງໃນສາຍພັນດຽວກັນ;

4. **ເຊື້ອຈຸລິນຊີ** ໝາຍເຖິງ ໄວຣັດ, ແບັກທີເຣຍ, ເຫັດລາ, ກາຝາກ ແລະ ເຊື້ອພະຍາດທີ່ມີຊີວິດ ທີ່ບໍ່ສາມາດເບິ່ງດ້ວຍຕາເປົ່າໄດ້;

5. **ສິ່ງແປກປອມ (Foreign Objects)** ໝາຍເຖິງ ສິ່ງທີ່ບໍ່ຕ້ອງການ ປະປົນຢູ່ກັບຜະລິດຕະພັນ ຫຼື ບໍລິເວນອ້ອມຮອບຜະລິດຕະພັນ ຊຶ່ງອາດກໍ່ໃຫ້ເກີດຜົນກະທົບຕໍ່ຄວາມປອດໄພ ຫຼື ຄຸນນະພາບຂອງຜົນຜະລິດ ເປັນຕົ້ນ ແກ້ວ, ໂລຫະ, ໄມ້, ກ້ອນຫີນ, ດິນ, ໃບໄມ້, ຜ້າຢາງ ຫຼື ຖົງຢາງ ແລະ ແກ່ນຫຍ້າ;

6. **ສິ່ງເສດເຫຼືອຈາກຄົນ** ໝາຍເຖິງ ອາຈົມ, ປັດສະວະ, ນ້ຳເສຍຈາກການນຳໃຊ້ຂອງຄົນ, ຝຸ່ນກະດູກ, ເສັ້ນຜົມ ແລະ ອື່ນໆ;

7. **ໄອເອສໂອ/ໄອອີຊີ (ISO/IEC: International Organization for Standardization /International Electrotechnical Commission)** ໝາຍເຖິງ ອົງການມາດຕະຖານສາກົນ ທີ່ກຳນົດມາດຕະຖານ ແລະ ກິດຈະກຳ ທີ່ກ່ຽວຂ້ອງ ສຳລັບ ແລກປ່ຽນສິນຄ້າ ແລະ ການບໍລິການໃນການພັດທະນາ ແລະ ການຮ່ວມມືສາກົນ ທາງດ້ານວິຊາການ ວິທະຍາສາດ, ເຕັກໂນໂລຊີ ແລະ ເສດຖະກິດ;

8. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011 (ISO/IEC 17011)** ໝາຍເຖິງ ມາດຕະຖານລະບົບຄຸນນະພາບ ຂອງການຮັບຮອງ ກ່ຽວກັບຂໍ້ກຳນົດທົ່ວໄປ ສຳລັບ ໜ່ວຍງານຮັບຮອງລະບົບບໍລິຫານ ເພື່ອຮັບຮອງໜ່ວຍງານກວດກາ ແລະ ຢັ້ງຢືນ;

9. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 (ISO/IEC 17065)** ໝາຍເຖິງ ມາດຕະຖານລະບົບຄວບຄຸມຄຸນນະພາບ ຂອງໜ່ວຍງານຢັ້ງຢືນ;

10. **ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025 (ISO/IEC 17025)** ໝາຍເຖິງ ມາດຕະຖານລະບົບຄຸນນະພາບ ຂອງຫ້ອງວິໄຈ ກ່ຽວກັບຂໍ້ກຳນົດເງື່ອນໄຂ ຂອງຫ້ອງວິໄຈ ສຳລັບການທົດສອບ, ທົດລອງ ແລະ ວິໄຈ;

11. **ສິນຄ້າພືດ** ໝາຍເຖິງ ຜົນຜະລິດ ຫຼື ຜະລິດຕະພັນພືດ ສຳລັບແລກປ່ຽນ, ຊື້ ຂາຍ;

12. **ເຄຫາສະຖານ** ໝາຍເຖິງ ສິ່ງກໍ່ສ້າງທີ່ນຳໃຊ້ເປັນ ໂຮງເຮືອນ, ສະຖານທີ່ຜະລິດ, ເກັບມ້ຽນ, ປຸງແຕ່ງ ແລະ ຫຸ້ມຫໍ່ຜົນຜະລິດ.

**ມາດຕາ 4 ຫຼັກການ ກ່ຽວກັບວຽກງານກະສິກຳສະອາດ**

ການເຄື່ອນໄຫວວຽກງານກະສິກຳສະອາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນຄຸນນະພາບ, ສະອາດ, ປອດໄພ ຕໍ່ສຸຂະພາບ, ຊີວິດ ຂອງຄົນ ແລະ ສັດ, ເປັນມິດກັບສິ່ງແວດລ້ອມ;
4. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ວ່ອງໄວ, ຍຸຕິທຳ ແລະ ສາມາດກວດສອບໄດ້;
5. ມີການປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານກະສິກຳສະອາດ ຢູ່ ສປປ ລາວ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບ ການລ້ຽງສັດ ແລະ ການປະມົງ.

**ມາດຕາ 6 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານກະສິກຳສະອາດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ການຄ້າ, ການລົງທຶນ, ການພັດທະນາຊັບພະຍາກອນມະນຸດ, ການເຂົ້າຮ່ວມ ແລະ ປະຕິບັດ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ການຜະລິດກະສິກຳສະອາດ

### ໝວດທີ 1
### ການຜະລິດກະສິກຳອິນຊີ

**ມາດຕາ 7 ການຜະລິດກະສິກຳອິນຊີ**

ການຜະລິດກະສິກຳອິນຊີ ແມ່ນ ຂະບວນການຜະລິດທີ່ບໍ່ນຳໃຊ້ສານເຄມີສັງເຄາະ ເຂົ້າໃນການຜະລິດກະສິກຳ, ມີລະບົບການຜະລິດ ທີ່ຮັກສາ ຄວາມຍືນຍົງ, ຄວາມອຸດົມສົມບູນຂອງດິນ, ຄວາມສົມດຸນ ຂອງລະບົບນິເວດວິທະຍາ ແລະ ມີຜົນດີຕໍ່ສຸຂະພາບຂອງຄົນ, ສັດ ໂດຍອີງໃສ່ຂະບວນການທາງນິເວດວິທະຍາ, ຄວາມຫຼາກຫຼາຍທາງຊີວະນານາພັນ ແລະ ຮອບວຽນການຜະລິດທີ່ປັບໂຕເຂົ້າກັບສະພາບເງື່ອນໄຂ ຂອງທ້ອງຖິ່ນ, ທົດແທນການນຳໃຊ້ປັດໄຈການຜະລິດ ທີ່ອາດເກີດມີຜົນກະທົບທາງລົບ, ເປັນລະບົບປະສົມປະສານລະຫວ່າງ ຄວາມຮູ້ພູມປັນຍາທ້ອງຖິ່ນ, ເຕັກນິກ ແລະ ວິທະຍາສາດ ເພື່ອໃຫ້ເກີດຜົນປະໂຫຍດ ໃຫ້ແກ່ ຄົນ, ສັດ, ພືດ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

**ມາດຕາ 8 ເງື່ອນໄຂການຜະລິດກະສິກຳອິນຊີ**

ເງື່ອນໄຂການຜະລິດກະສິກຳອິນຊີ ມີ ດັ່ງນີ້:

1. ມີໄລຍະປັບປ່ຽນ ຫຼື ໄລຍະຂ້າມຜ່ານ ສິບແປດເດືອນ ສຳລັບພືດຢືນຕົ້ນ ແລະ ສິບສອງເດືອນສຳລັບພືດລົ້ມລຸກ;
2. ຖ້າມີການຈັດການລະບົບການຜະລິດກະສິກຳອິນຊີທີ່ໄດ້ຮັບການຢັ້ງຢືນແລ້ວ ບໍ່ອະນຸຍາດໃຫ້ປ່ຽນໄປເຮັດການຜະລິດແບບອື່ນ, ໃນກໍລະນີຢຸດການຜະລິດກະສິກຳອິນຊີໃນພື້ນທີ່ນັ້ນ ກໍຕ້ອງຜ່ານ ໄລຍະປັບປ່ຽນ ຫຼື ໄລຍະຂ້າມຜ່ານ;
3. ແຍກ ການຜະລິດ ແລະ ຜົນຜະລິດ ກະສິກຳອິນຊີ ແລະ ບໍ່ແມ່ນກະສິກຳອິນຊີ ໃນກໍລະນີ ມີການຜະລິດແບບຄູ່ຂະໜານ;
4. ໃນທຸກຂະບວນການຜະລິດກະສິກຳອິນຊີ ບໍ່ໃຫ້ນຳໃຊ້ປັດໄຈການຜະລິດ ທີ່ເປັນຜະລິດຕະພັນຈາກການຕັດແຕ່ງພັນທຸກຳ, ສານເຄມີສັງເຄາະ ແລະ ສານເຄມີອື່ນ, ມີມາດຕະການປ້ອງກັນ ໂດຍການ ສ້າງແນວກັ້ນ ຫຼື ແລວປ້ອງກັນໃຫ້ເໝາະສົມ, ໃນກໍລະນີປະເມີນພົບເຫັນການປົນເປື້ອນທີ່ມີຄວາມສ່ຽງສູງ ຕ້ອງມີການວິໄຈ ແລະ ໄຈ້ແຍກ;
5. ນຳໃຊ້ມາດຕະການປ້ອງກັນ ການສູນເສຍ ແລະ ການເສື່ອມໂຊມຂອງດິນ, ມີແຜນນຳໃຊ້ນ້ຳ ຢ່າງເໝາະສົມ, ນຳໃຊ້ວັດສະດຸອິນຊີ ເພື່ອເຮັດຝຸ່ນຂຽວ ແລະ ຝຸ່ນບົ່ມ, ບໍ່ໃຫ້ຈູດພືດ ແລະ ບໍ່ໃຫ້ນຳໃຊ້ສິ່ງເສດເຫຼືອຈາກຄົນ ໃນພື້ນທີ່ການຜະລິດກະສິກຳອິນຊີ;
6. ນຳໃຊ້ ເມັດພັນ ແລະ ແນວພັນ ທີ່ມີຄຸນນະພາບຈາກການຜະລິດກະສິກຳອິນຊີ, ຍົກເວັ້ນ ໃນກໍລະນີເມັດພັນ ຫຼື ແນວພັນນັ້ນ ບໍ່ສາມາດຫາໄດ້ໃນທ້ອງຖິ່ນ ແລະ ບໍ່ໃຫ້ນຳໃຊ້ແນວພັນຕັດແຕ່ງພັນທຸກຳ;
7. ຮັກສາ ຄວາມຫຼາກຫຼາຍທາງດ້ານຊີວະນານາພັນ, ແຫຼ່ງທີ່ຢູ່ອາໄສຂອງສິ່ງທີ່ມີຊີວິດ ແລະ ບໍ່ສົ່ງຜົນກະທົບທາງລົບ ຕໍ່ພື້ນທີ່ອະນຸລັກ ແລະ ພື້ນທີ່ມໍຣະດົກ;

8. ນຳໃຊ້ຫຼັກການປ້ອງກັນພືດແບບປະສົມປະສານ ເປັນຕົ້ນ ການຈັດການສັດຕູພືດ, ການປູກພືດອາໄສ, ການເລືອກແນວພັນທີ່ເໝາະສົມ ແລະ ເພີ່ມຄວາມຫຼາກຫຼາຍທາງດ້ານຊີວະນານາພັນ;

9. ການຈັດການ ຫຼັງການເກັບກ່ຽວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງ ຕ້ອງມີມາດຕະການປ້ອງກັນການປົນເປື້ອນ ແລະ ບໍ່ໃຫ້ປົນກັນ ລະຫວ່າງ ຜົນຜະລິດກະສິກຳອິນຊີ ກັບຜົນຜະລິດ ທີ່ບໍ່ແມ່ນກະສິກຳອິນຊີ ຢູ່ໃນຂະບວນການຜະລິດ ແລະ ປະຕິບັດຕາມມາດຕະຖານສຸຂານາໄມທີ່ດີ, ມາດຕະຖານການຜະລິດທີ່ດີ;

10. ຜົນຜະລິດ ທີ່ໄດ້ຮັບການຢັ້ງຢືນ ຕ້ອງມີກາໝາຍກະສິກຳອິນຊີ, ຜະລິດຕະພັນທີ່ໄດ້ຮັບການຢັ້ງຢືນແລ້ວຕ້ອງຕິດກາໝາຍກະສິກຳອິນຊີ ແລະ ຕິດສະຫຼາກກຳກັບ, ສ່ວນຜົນຜະລິດ ແລະ ຜະລິດຕະພັນ ກະສິກຳອິນຊີຢູ່ໃນໄລຍະການປັບປ່ຽນ ຫຼື ໄລຍະຂ້າມຜ່ານ ບໍ່ອະນຸຍາດໃຫ້ນຳໃຊ້ກາໝາຍກະສິກຳອິນຊີ;

11. ທຸກຂັ້ນຕອນ ການຜະລິດ, ການປຸງແຕ່ງ ຈົນຮອດຜະລິດຕະພັນສຳເລັດຮູບ, ຕ່ອງໂສ້ການສະໜອງຕ້ອງມີການບັນທຶກ, ມີຄວາມໂປ່ງໃສ ແລະ ສາມາດກວດສອບຄືນຫຼັງໄດ້;

12. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 9 ການເກັບກ່ຽວຜົນຜະລິດຈາກທຳມະຊາດ ຕາມມາດຕະຖານກະສິກຳອິນຊີ**

ການເກັບກ່ຽວຜົນຜະລິດຈາກທຳມະຊາດ ຕາມມາດຕະຖານກະສິກຳອິນຊີ ຕ້ອງປະຕິບັດ ດັ່ງນີ້:

1. ເກັບກ່ຽວແບບ ຍືນຍົງ ແລະ ອະນຸລັກ;
2. ເກັບກ່ຽວໃນບໍລິເວນທີ່ກຳນົດໃຫ້ ເທົ່ານັ້ນ, ໃນພື້ນທີ່ເກັບກ່ຽວຜົນຜະລິດ ບໍ່ໄດ້ນຳໃຊ້ເຮັດການຜະລິດ ຫຼື ບໍ່ໄດ້ນຳໃຊ້ສານຕ້ອງຫ້າມ ຢ່າງໜ້ອຍ ສາມປີ;
3. ຕ້ອງເປັນສະມາຊິກພາຍໃນບ້ານ ແລະ ໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານທີ່ກ່ຽວຂ້ອງ;
4. ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 10 ປັດໄຈການຜະລິດກະສິກຳອິນຊີເພື່ອການຄ້າ**

ປັດໄຈການຜະລິດກະສິກຳອິນຊີເພື່ອການຄ້າ ແມ່ນ ປັດໄຈການຜະລິດທີ່ຜ່ານຂະບວນການຜະລິດ ແລະ ປຸງແຕ່ງ ເພື່ອຜົນປະໂຫຍດທາງການຄ້າ ເປັນຕົ້ນ ຝຸ່ນອົງຄະທາດ, ສານປັບປຸງດິນ, ສານເລັ່ງການຈະເລີນເຕີບໂຕ, ສະໝຸນໄພປ້ອງກັນພືດ ໂດຍປະຕິບັດຕາມ ມາດຕະຖານກະສິກຳອິນຊີ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ. ສຳລັບປັດໄຈການຜະລິດກະສິກຳອິນຊີ ທີ່ຜະລິດໃນພື້ນທີ່ການຜະລິດ ສາມາດນຳໃຊ້ ໃນການຜະລິດ ແລະ ປຸງແຕ່ງໄດ້.

ສຳລັບປັດໄຈການຜະລິດກະສິກຳອິນຊີທີ່ນຳເຂົ້າ ຕ້ອງໄດ້ຮັບການຢັ້ງຢືນມາດຕະຖານກະສິກຳອິນຊີ ຈາກໜ່ວຍງານທີ່ໄດ້ຮັບການຢັ້ງຢືນມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065 ຂອງປະເທດຕົ້ນທາງ ແລະ ຍັງຕ້ອງຂຶ້ນທະບຽນນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ ຈຶ່ງສາມາດນຳໃຊ້ໄດ້.

**ມາດຕາ 11 ການຈັດການຜົນຜະລິດກະສິກຳອິນຊີ**

ທຸກຂັ້ນຕອນ ການຈັດການຫຼັງການເກັບກ່ຽວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງ ຕ້ອງປະຕິບັດຕາມ ມາດຕະຖານສຸຂານາໄມທີ່ດີ ແລະ ມາດຕະຖານການຜະລິດທີ່ດີ ເພື່ອຮັກສາຄຸນລັກສະນະຂອງຜະລິດຕະພັນ.

## ໝວດທີ 2
## ການຜະລິດກະສິກຳທີ່ດີ

**ມາດຕາ 12 ການຜະລິດກະສິກຳທີ່ດີ**

ການຜະລິດກະສິກຳທີ່ດີ ແມ່ນ ລະບົບການຜະລິດ ທີ່ນຳໃຊ້ວິທີການ ແລະ ມາດຕະການຄວບຄຸມ ເລີ່ມແຕ່ການຜະລິດ, ການເກັບກ່ຽວ ແລະ ຫຼັງການເກັບກ່ຽວ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນຄວາມສ່ຽງທີ່ເປັນອັນຕະລາຍ ຕໍ່ຜົນຜະລິດ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພ ໃຫ້ແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກ.

**ມາດຕາ 13 ເງື່ອນໄຂການຜະລິດກະສິກຳທີ່ດີ**

ເງື່ອນໄຂການຜະລິດກະສິກຳທີ່ດີ ມີ ດັ່ງນີ້:

1. ປະຫວັດ ແລະ ການຈັດການ ພື້ນທີ່ ຕ້ອງເປັນພື້ນທີ່ບໍ່ມີຄວາມສ່ຽງການປົນເປື້ອນສານເຄມີ, ທາດໂລຫະໜັກ ແລະ ເຊື້ອຈຸລິນຊີອັນຕະລາຍ;

2. ການນຳໃຊ້ແນວພັນພືດ ໃຫ້ນຳໃຊ້ເມັດພັນ ແລະ ແນວພັນທີ່ມີຄຸນນະພາບ ທີ່ໄດ້ຈາກການຜະລິດກະສິກຳທີ່ດີ, ໃຫ້ບັນທຶກ ການນຳໃຊ້ສານເຄມີ, ເຫດຜົນການນຳໃຊ້ ແລະ ແຫຼ່ງທີ່ມາແນວພັນພືດ;

3. ການນຳໃຊ້ຝຸ່ນ ແລະ ສານປັບປຸງດິນ ຕ້ອງປະເມີນຜົນຜະລິດພືດແຕ່ລະຊະນິດ ທີ່ມີຄວາມສ່ຽງຕໍ່ການປົນເປື້ອນ ສານເຄມີ ແລະ ເຊື້ອຈຸລິນຊີ, ບໍ່ໃຫ້ນຳໃຊ້ອິນຊີວັດຖຸທີ່ບໍ່ຜ່ານການບົ່ມ ຫຼື ໝັກ ແລະ ບໍ່ໃຫ້ນຳໃຊ້ສິ່ງເສດເຫຼືອຈາກຄົນ ເຂົ້າໃນການຜະລິດ;

4. ການນຳໃຊ້ນໍ້າ ຕ້ອງມີການປະເມີນຄວາມສ່ຽງຂອງນໍ້າ ຈາກສານເຄມີ ແລະ ເຊື້ອຈຸລິນຊີ ກ່ອນການນຳໃຊ້ເຂົ້າສູ່ການຜະລິດ, ກໍລະນີ ນໍ້າມີຄວາມສ່ຽງຕໍ່ການປົນເປື້ອນ ຕ້ອງທົດສອບຄຸນນະພາບນໍ້າ, ບໍ່ໃຫ້ນຳໃຊ້ນໍ້າເປື້ອນ ທີ່ບໍ່ຜ່ານການບຳບັດ ໃນລະຫວ່າງການຜະລິດ ແລະ ການຈັດການຜົນຜະລິດ ຫຼັງການເກັບກ່ຽວ;

5. ການນຳໃຊ້ສານເຄມີ ແລະ ຢາປາບສັດຕູພືດ ຕ້ອງປະຕິບັດ ຕາມສະຫຼາກ, ໄລຍະຕົກຄ້າງຂອງສານເຄມີ ແລະ ໃຫ້ຢຸດນຳໃຊ້ກ່ອນການເກັບກ່ຽວ ຕາມກຳນົດຂອງສານເຄມີແຕ່ລະຊະນິດ, ບໍ່ໃຫ້ປະສົມສານເຄມີຫຼາຍກວ່າສອງຊະນິດ, ສານເຄມີທີ່ເຫຼືອຈາກການປະສົມນຳໃຊ້ນັ້ນ ຕ້ອງກຳຈັດໃຫ້ຖືກວິທີ, ບໍ່ໃຫ້ນຳເອົາພາຊະນະບັນຈຸສານເຄມີເປົ່າ ມາໃຊ້ຄືນໃໝ່ ແລະ ຕ້ອງເກັບມ້ຽນໄວ້ໃນບ່ອນທີ່ປອດໄພ ຈົນກວ່າ ຈະຖືກ ກຳຈັດ ຫຼື ທຳລາຍ;

6. ການເກັບກ່ຽວ ແລະ ການຈັດການຜົນຜະລິດ ຕ້ອງນຳໃຊ້ວັດຖຸປະກອນ, ພາຊະນະບັນຈຸ ແລະ ເຄື່ອງມື ທີ່ຜະລິດມາຈາກວັດຖຸທີ່ບໍ່ປົນເປື້ອນຕໍ່ຜົນຜະລິດ, ບໍ່ໃຫ້ນຳໃຊ້ພາຊະນະທີ່ໃຊ້ບັນຈຸສິ່ງເສດເຫຼືອສານເຄມີ ແລະ ວັດຖຸທີ່ເປັນອັນຕະລາຍ, ບໍ່ໃຫ້ວາງຜົນຜະລິດໃສ່ໜ້າດິນ ຫຼື ພື້ນຫ້ອງ ໂດຍກົງ ໃນລະຫວ່າງການເກັບກ່ຽວ ແລະ ການເກັບຮັກສາຜົນຜະລິດ;

7. ເຄຫາສະຖານ ທີ່ໃຊ້ສຳລັບການປຸກ, ການຫຸ້ມຫໍ່, ການຈັດການ ແລະ ການເກັບຮັກສາຜົນຜະລິດ ຕ້ອງໄດ້ຮັບການບູລະນະຮັກສາໃຫ້ຢູ່ໃນສະພາບດີ, ສ້າງລະບົບ ລະບາຍນໍ້າເປື້ອນ ແລະ ກຳຈັດຂີ້ເຫຍື້ອ, ດອກໄຟຢູ່ເບື້ອງເທິງສະຖານທີ່ຈັດການຜົນຜະລິດ ຕ້ອງມີສິ່ງປ້ອງກັນ, ພາຊະນະບັນຈຸ ແລະ ເຄື່ອງມື ຕ້ອງເຮັດຄວາມສະອາດເປັນປົກກະຕິ;

8. ສະຖານທີ່ຫຸ້ມຫໍ່, ສາງເກັບຮັກສາ, ສາງເກັບມ້ຽນ ຜົນຜະລິດ, ອຸປະກອນເຄື່ອງມື, ພາຊະນະບັນຈຸ ແລະ ບັນດາອຸປະກອນຕ່າງໆ ຕ້ອງທຳຄວາມສະອາດ ແລະ ຂ້າເຊື້ອພະຍາດ;

9. ສັດລ້ຽງຕ່າງໆທີ່ຢູ່ຕາມບ້ານ ແລະ ຢູ່ໃນຟາມ ບໍ່ໃຫ້ເຂົ້າມາໃນພື້ນທີ່ການຜະລິດ, ອ້ອມຮອບສະຖານທີ່ເກັບຮັກສາ, ຫຸ້ມຫໍ່ ແລະ ສາງເກັບຮັກສາຜົນຜະລິດ, ພ້ອມທັງນຳໃຊ້ມາດຕະການປ້ອງກັນ ຢ່າງເໝາະສົມ ເພື່ອປ້ອງກັນ ແລະ ກຳຈັດສັດຕູພືດ;

10. ມີຄູ່ມືການອະນາໄມສ່ວນບຸກຄົນ ແລະ ວາງໄວ້ບ່ອນທີ່ເຫັນໄດ້ງ່າຍ, ມີຫ້ອງນໍ້າ ແລະ ສິ່ງອຳນວຍຄວາມສະດວກ ໃນການເຮັດອະນາໄມສ່ວນບຸກຄົນ;

11. ນຳໃຊ້ນໍ້າທີ່ສະອາດສາມາດດື່ມໄດ້ ຫຼື ມີຄ່າເທົ່າກັບມາດຕະຖານຄຸນນະພາບຂອງນໍ້າດື່ມ ສຳລັບລ້າງຜົນຜະລິດຄັ້ງສຸດທ້າຍ ແລະ ນຳໃຊ້ສານເຄມີທີ່ອະນຸຍາດ ເພື່ອຮັກສາຄຸນນະພາບຜົນຜະລິດຫຼັງການເກັບກ່ຽວ;

12. ການເກັບຮັກສາ ແລະ ການຂົນສົ່ງ ບໍ່ໃຫ້ວາງພາຊະນະບັນຈຸຜົນຜະລິດ ຕິດກັບດິນ, ກວດກາ ແລະ ທຳຄວາມສະອາດ ພາຊະນະຮອງພື້ນກ່ອນການນຳໃຊ້ທຸກຄັ້ງ ແລະ ແຍກຜົນຜະລິດກະສິກຳທີ່ດີ ອອກຈາກສິນຄ້າທົ່ວໄປ;

13. ຕ້ອງໃສ່ຊື່ ແລະ ເລກລະຫັດພື້ນທີ່ການຜະລິດ, ພ້ອມທັງລະບຸໃສ່ໃນແຜນທີ່ ທີ່ກຳນົດໄວ້ ແລະ ບັນທຶກຂໍ້ມູນການຜະລິດ, ການຂາຍຜົນຜະລິດ ເພື່ອສາມາດກວດຄືນຫຼັງ ແລະ ຮຽກຄືນໄດ້, ກໍລະນີ ພົບວ່າ ຜົນຜະລິດ ມີການປົນເປື້ອນ ຫຼື ມີຄວາມສ່ຽງຕໍ່ການປົນເປື້ອນ ຕ້ອງແຍກຜົນຜະລິດອອກຕ່າງຫາກ ແລະ ບໍ່ໃຫ້ຈຳໜ່າຍ;

14. ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ຕ້ອງໄດ້ຮັບການຝຶກອົບຮົມ ແລະ ມີຄວາມຮູ້ ກ່ຽວກັບການປະຕິບັດມາດຕະຖານກະສິກຳທີ່ດີ;

15. ການບັນທຶກ ແລະ ເກັບຮັກສາເອກະສານ ຕ້ອງເກັບໄວ້ ຢ່າງໜ້ອຍ ສອງປີ ຂຶ້ນໄປ ແລະ ນຳໃຊ້ເອກະສານປັດຈຸບັນ;

16. ການທົບທວນຄືນ ຕ້ອງປະຕິບັດ ຢ່າງໜ້ອຍປີລະຄັ້ງ, ເກັບຮັກສາບົດບັນທຶກ ແລະ ມີມາດຕະການແກ້ໄຂຂໍ້ສະເໜີ ກ່ຽວກັບ ຄວາມປອດໄພຜົນຜະລິດ;

17. ປະຕິບັດຕາມເງື່ອນໄຂອື່ນ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະກາດໃຊ້ ໃນແຕ່ລະໄລຍະ.

**ມາດຕາ 14 ການຈັດການຜົນຜະລິດກະສິກຳທີ່ດີ**

ທຸກຂັ້ນຕອນ ການຈັດການຫຼັງການເກັບກ່ຽວ, ການປຸງແຕ່ງ, ການຫຸ້ມຫໍ່, ການເກັບຮັກສາ ແລະ ການຂົນສົ່ງ ໂດຍນຳໃຊ້ວິທີການ ແລະ ມາດຕະການຄວບຄຸມ ເພື່ອຫຼຸດຜ່ອນການປົນເປື້ອນ ແລະ ສິ່ງທີ່ເປັນອັນຕະລາຍຕໍ່ຜົນຜະລິດ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພຂອງຜົນຜະລິດ.

## ພາກທີ III
## ລະບົບມາດຕະຖານກະສິກຳສະອາດ

**ມາດຕາ 15 ລະບົບມາດຕະຖານກະສິກຳສະອາດ**

ລະບົບມາດຕະຖານກະສິກຳສະອາດ ປະກອບດ້ວຍ:

1. ມາດຕະຖານກະສິກຳອິນຊີ;
2. ມາດຕະຖານກະສິກຳທີ່ດີ;
3. ມາດຕະຖານສິນຄ້າພືດ;
4. ມາດຕະຖານກະສິກຳທີ່ປອດໄພ.

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ມາດຕະຖານກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ມາດຕະຖານສິນຄ້າພືດ ແລະ ມາດຕະຖານກະສິກຳທີ່ປອດໄພ.

**ມາດຕາ 16 ມາດຕະຖານກະສິກຳອິນຊີ**

ມາດຕະຖານກະສິກຳອິນຊີ ແມ່ນ ມາດຕະຖານລວມຂອງການຜະລິດພືດ ຊຶ່ງກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ບົນພື້ນຖານການເຊື່ອມໂຍງມາດຕະຖານ, ການກວດກາ ແລະ ການຢັ້ງຢືນ ກັບພາກພື້ນ ແລະ ສາກົນ.

**ມາດຕາ 17 ມາດຕະຖານກະສິກຳທີ່ດີ**

ມາດຕະຖານກະສິກຳທີ່ດີ ແມ່ນ ມາດຕະຖານລວມຂອງການຜະລິດພືດ ຊຶ່ງກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດ ບົນພື້ນຖານການເຊື່ອມໂຍງມາດຕະຖານ, ການກວດກາ ແລະ ການຢັ້ງຢືນ ກັບພາກພື້ນ ແລະ ສາກົນ.

**ມາດຕາ 18 ມາດຕະຖານສິນຄ້າພືດ**

ມາດຕະຖານສິນຄ້າພືດ ແມ່ນ ການກຳນົດຄຸນນະພາບ ແລະ ຄວາມປອດໄພ ຂອງຜົນຜະລິດ ໂດຍສະເພາະ ສີ, ລົດຊາດ, ຂະໜາດ, ຄວາມຊຸ່ມ, ນ້ຳໜັກ ກ່ຽວກັບຄຸນລັກສະນະທາງຊີວະ-ເຄມີຂອງພືດ ລວມທັງການ ຫຸ້ມຫໍ່, ບັນຈຸ, ສະຫຼາກ ແລະ ການໝາຍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດ ຕາມມາດຕະຖານ ຂອງຄູ່ຄ້າ ພາຍໃນ ແລະ ຕ່າງປະເທດ.

ມາດຕະຖານສິນຄ້າພືດ ແຕ່ລະຊະນິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ມາດຕະຖານກະສິກຳທີ່ປອດໄພ**

ມາດຕະຖານກະສິກຳທີ່ປອດໄພ ແມ່ນ ຮູບແບບການຜະລິດທົ່ວໄປ ຫຼື ການຜະລິດເປັນສິນຄ້າ ຊຶ່ງການ ຜະລິດດັ່ງກ່າວ ຕ້ອງປະຕິບັດຕາມມາດຕະຖານຄວາມປອດໄພຂອງອາຫານ.

ມາດຕະຖານກະສິກຳທີ່ປອດໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 ການທົບທວນ ແລະ ປັບປຸງລະບົບມາດຕະຖານກະສິກຳສະອາດ**

ລະບົບມາດຕະຖານກະສິກຳສະອາດ ຕ້ອງໄດ້ຮັບການທົບທວນການຈັດຕັ້ງປະຕິບັດທຸກ ຫ້າປີ. ໃນກໍລະນີ ມີຄວາມຈຳເປັນ ຕ້ອງປັບປຸງມາດຕະຖານກະສິກຳສະອາດ ເພື່ອໃຫ້ສອດຄ່ອງກັບພາກພື້ນ ແລະ ສາກົນ ສາມາດ ດຳເນີນການທົບທວນກ່ອນກຳນົດເວລາດັ່ງກ່າວ.

## ພາກທີ IV
## ການພັດທະນາ ແລະ ການສົ່ງເສີມ ກະສິກຳສະອາດ

### ໝວດທີ 1
### ການພັດທະນາວຽກງານກະສິກຳສະອາດ

**ມາດຕາ 21 ການພັດທະນາວຽກງານກະສິກຳສະອາດ**

ການພັດທະນາວຽກງານກະສິກຳສະອາດ ມີ ດັ່ງນີ້:

1. ການພັດທະນາໂຄງລ່າງພື້ນຖານ;
2. ການພັດທະນາອົງກອນ ແລະ ຊັບພະຍາກອນມະນຸດ.

**ມາດຕາ 22 ການພັດທະນາໂຄງລ່າງພື້ນຖານ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ໃນການພັດທະນາໂຄງລ່າງພື້ນຖານ ດັ່ງນີ້:

1. ພັດທະນາ ສູນມາດຕະຖານກະສິກຳສະອາດ ແລະ ສ້າງສະຖານທີ່ ເພື່ອ ຄົ້ນຄວ້າ ທົດລອງ, ສາທິດ, ຝຶກອົບຮົມ, ທັດສະນະສຶກສາ, ແລກປ່ຽນບົດຮຽນວິຊາການ ແລະ ຖ່າຍທອດ ເຕັກໂນໂລຊີກະສິກຳສະອາດ ຢູ່ ພາຍໃນ ໃຫ້ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;

2. ສ້າງ ແລະ ພັດທະນາ ຫ້ອງວິໄຈ, ໂຮງເຮືອນປູກພືດທັນສະໄໝ, ສາງເກັບມ້ຽນ ເພື່ອຮັບປະກັນ ຄຸນນະພາບ ມາດຕະຖານສິນຄ້າພືດ ໃຫ້ສອດຄ່ອງຕາມມາດຕະຖານ ຂອງພາກພື້ນ ແລະ ສາກົນ.

**ມາດຕາ 23 ການພັດທະນາ ອົງກອນ ແລະ ຊັບພະຍາກອນມະນຸດ**

ການພັດທະນາ ອົງກອນ ແລະ ຊັບພະຍາກອນມະນຸດ ໃຫ້ປະຕິບັດ ດັ່ງນີ້:

1. ພັດທະນາໜ່ວຍງານຮັບຮອງລະບົບການຢັ້ງຢືນກະສິກຳສະອາດ ຂັ້ນສູນກາງ ໃຫ້ສອດຄ່ອງມາດຕະຖານ ສາກົນ ໄອເອສໂອ/ໄອອີຊີ 17011;

2. ພັດທະນາໜ່ວຍງານອອກໃບຢັ້ງຢືນ ຂັ້ນສູນກາງ ແລະ ຂັ້ນແຂວງ ໃຫ້ສອດຄ່ອງຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065;

3. ຍົກລະດັບຄວາມຮູ້ວິຊາການສະເພາະດ້ານ ການກວດກາ ແລະ ການຢັ້ງຢືນ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເປັນຕົ້ນ ນັກກວດສອບ, ນັກກວດກາ ຂັ້ນສູນກາງ ແລະ ຂັ້ນແຂວງ, ທີ່ປຶກສາຟາມ ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ວິຊາການກວດກາຄຸນນະພາບພາຍໃນ ຂອງຜູ້ປະກອບການ;

4. ສ້າງ ວິທະຍາກອນ, ຄູຝຶກ ກ່ຽວກັບກະສິກຳສະອາດ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ໃຫ້ເປັນຜູ້ຊ່ຽວຊານສະເພາະດ້ານ;

5. ສ້າງ ແລະ ພັດທະນາ ຫຼັກສູດກະສິກຳສະອາດ ເພື່ອນຳໃຊ້ໃນການຮຽນ-ການສອນ ຢູ່ສະຖານການສຶກສາ ຕາມຄວາມເໝາະສົມ.

## ໝວດທີ 2
## ການສົ່ງເສີມກະສິກຳສະອາດ

### ມາດຕາ 24 ການສົ່ງເສີມກະສິກຳສະອາດ

ການສົ່ງເສີມກະສິກຳສະອາດ ມີ ດັ່ງນີ້:

1. ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ;
2. ການນຳໃຊ້ທີ່ດິນຂອງລັດ;
3. ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ;
4. ການເຂົ້າເຖິງແຫຼ່ງທຶນ;
5. ນະໂຍບາຍ ດ້ານພາສີ ແລະ ອາກອນ;
6. ການບໍລິການໃຫ້ຄຳປຶກສາ ແລະ ພັດທະນາ;
7. ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ;
8. ການນຳໃຊ້ ແລະ ການປົກປ້ອງ ຊັບສິນທາງປັນຍາ;
9. ການນຳໃຊ້ ແລະ ການຖ່າຍທອດ ເຕັກໂນໂລຊີ.

### ມາດຕາ 25 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ຜູ້ປະກອບການກະສິກຳສະອາດ ດ້ວຍການສ້າງ ແລະ ປັບປຸງ ລະບຽບການໃຫ້ມີຄວາມຈະແຈ້ງ ແລະ ຣັດກຸມ, ສ້າງເວທີປຶກສາຫາລືດ້ານວິຊາການ ລະຫວ່າງພາກລັດ ແລະ ພາກທຸລະກິດ, ກຳນົດວິທີການແກ້ໄຂບັນຫາ ທີ່ເປັນການກີດໜ່ວງ ພ້ອມກັນນັ້ນກໍຕ້ອງເພີ່ມທະວີການບໍລິຫານ ແລະ ການບໍລິການຂອງຕົນ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ.

### ມາດຕາ 26 ການນຳໃຊ້ທີ່ດິນຂອງລັດ

ຂະແໜງການ ແລະ ອົງການ ທີ່ກ່ຽວຂ້ອງ ເປັນເຈົ້າການສົມທົບ ກັບອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ຈັດສັນທີ່ດິນຂອງລັດ ທີ່ກຳນົດເປັນເຂດຜະລິດ, ເຂດອະນຸລັກ ໃຫ້ຜູ້ປະກອບການກະສິກຳສະອາດ ປົກປັກຮັກສາ ແລະ ນຳໃຊ້, ບໍ່ປ່ຽນເປົ້າໝາຍການນຳໃຊ້ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ.

### ມາດຕາ 27 ການສະໜອງໂຄງລ່າງພື້ນຖານທີ່ຈຳເປັນ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເປັນເຈົ້າການຄົ້ນຄວ້າ ສ້າງ ແລະ ສະໜອງ ໂຄງລ່າງພື້ນຖານທີ່ຈຳເປັນ ຕາມແຜນພັດທະນາເສດຖະກິດ-ສັງຄົມ ເພື່ອສ້າງເງື່ອນໄຂສະດວກ ໃຫ້ຜູ້

ປະກອບການກະສິກຳສະອາດ ສາມາດນຳໃຊ້ເຂົ້າ ໃນການຜະລິດ, ດຳເນີນທຸລະກິດ ເປັນຕົ້ນ ເສັ້ນທາງ ຄົມມະນາຄົມ, ຊົນລະປະທານ, ຕາໜ່າງໄຟຟ້າ ແລະ ເຄືອຂ່າຍອິນເຕີເນັດ.

**ມາດຕາ 28 ການເຂົ້າເຖິງແຫຼ່ງທຶນ**

ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ບັນດາອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ຜູ້ປະກອບການກະສິກຳສະອາດ ສາມາດເຂົ້າເຖິງແຫຼ່ງທຶນ ຕາມກົດໝາຍ ແລະ ລະບຽບການ.

ທະນາຄານ ແຫ່ງ ສປປ ລາວ ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ສ້າງກົນໄກ, ປັບປຸງໂຄງສ້າງດ້ານສິນເຊື່ອ ແລະ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດ ໃນການສະໜອງສິນເຊື່ອ, ການຄ້ຳປະກັນສິນເຊື່ອ ແລະ ການເຊົ່າສິນເຊື່ອ ເພື່ອຮັບປະກັນ ໃຫ້ຜູ້ປະກອບການກະສິກຳສະອາດ ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຢ່າງທົ່ວເຖິງ.

**ມາດຕາ 29 ນະໂຍບາຍ ດ້ານພາສີ ແລະ ອາກອນ**

ຜູ້ປະກອບການກະສິກຳສະອາດ ຈະໄດ້ຮັບນະໂຍບາຍ ດ້ານພາສີ ແລະ ອາກອນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ. ໃນກໍລະນີພິເສດ ເປັນຕົ້ນ ກິດຈະການ ຕິດພັນກັບແຜນງານການຄ້ຳປະກັນສະບຽງອາຫານ, ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ພູມປັນຍາທ້ອງຖິ່ນ ຫຼື ໄພພິບັດທຳມະຊາດ ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ ຍົກເວັ້ນ ຫຼື ຫຼຸດຜ່ອນ ດ້ານພາສີ ແລະ ອາກອນ ເພື່ອສະເໜີລັດຖະບານ ພິຈາລະນາ ນຳສະເໜີ ຕໍ່ສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຕົກລົງ.

**ມາດຕາ 30 ການບໍລິການໃຫ້ຄຳປຶກສາ ແລະ ພັດທະນາ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ໃນການໃຫ້ຄຳປຶກສາ ແລະ ພັດທະນາ ຜູ້ປະກອບການກະສິກຳສະອາດ ດ້ວຍການສ້າງຕັ້ງໜ່ວຍງານ ເພື່ອເຄື່ອນໄຫວໃຫ້ບໍລິການໃຫ້ຄຳປຶກສາ ແລະ ພັດທະນາ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກ ໃນການໃຫ້ການບໍລິການໃຫ້ຄຳປຶກສາ ໃຫ້ແກ່ຜູ້ປະກອບການກະສິກຳສະອາດ ຕາມພາລະບົດບາດ ຂອງຕົນ ພ້ອມທັງຊຸກຍູ້ ແລະ ສົ່ງເສີມ ພາກສ່ວນຕ່າງໆ ໃຫ້ບໍລິການໃຫ້ຄຳປຶກສາ ແລະ ພັດທະນາ ໃຫ້ຜູ້ປະກອບການກະສິກຳສະອາດ.

**ມາດຕາ 31 ການເຂົ້າເຖິງ ແລະ ການຂະຫຍາຍ ຕະຫຼາດ**

ຂະແໜງການກະສິກຳ ແລະ ສິ່ງແວດລ້ອມ ສົມທົບກັບຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ການສະໜັບສະໜູນ ຜູ້ປະກອບການກະສິກຳສະອາດ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາ ກ່ຽວກັບຕະຫຼາດ, ການແນະນຳຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ຜູ້ປະກອບການກະສິກຳສະອາດ ເປັນຜູ້ສະໜອງສິນຄ້າ ແລະ ການບໍລິການ ແລະ ນຳໃຊ້ຜົນຜະລິດກະສິກຳສະອາດ.

**ມາດຕາ 32 ການນຳໃຊ້ ແລະ ການປົກປ້ອງ ຊັບສິນທາງປັນຍາ**

ກະຊວງອຸດສາຫະກຳ ແລະ ການຄ້າ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ຜູ້ປະກອບການ ປະດິດສ້າງ, ປະດິດຄິດແຕ່ງ, ສ້າງເສດຖະກິດພູມປັນຍາ ແລະ ນຳໃຊ້ຊັບສິນທາງປັນຍາ ພ້ອມທັງສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການກະສິກຳສະອາດ ໃນການຈົດທະບຽນ, ຄຸ້ມຄອງ ແລະ ປົກປ້ອງສິດ ຕໍ່ຊັບສິນທາງປັນຍາ.

**ມາດຕາ 33 ການນຳໃຊ້ ແລະ ການຖ່າຍທອດ ເຕັກໂນໂລຊີ**

ລັດ ສົ່ງເສີມການນຳໃຊ້ ແລະ ການຖ່າຍທອດເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດັ່ງນີ້:

1. ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ຄົ້ນຄວ້າທົດລອງ, ວິໄຈ, ນຳໃຊ້ ແລະ ພັດທະນາ ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດເຕັກໂນໂລຊີດັ່ງກ່າວ ນຳໃຊ້ເຂົ້າໃນການຜະລິດ, ການຄ້າ ແລະ ການບໍລິການ ໃຫ້ຜົນຜະລິດ ແລະ ຜະລິດຕະພັນ ກະສິກຳສະອາດ ເພີ່ມຜະລິດຕະພາບ, ຄຸນນະພາບ, ສະອາດ, ປອດໄພ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
2. ສະໜອງທຶນໃນຮູບແບບຕ່າງໆ ເພື່ອນຳໃຊ້ເຂົ້າໃນການປັບປຸງ ແລະ ຖ່າຍທອດເຕັກໂນໂລຊີ ທີ່ທັນສະໄໝ ແລະ ແທດເໝາະກັບຄວາມຕ້ອງການ.

## ພາກທີ V
## ໜ່ວຍງານ ແລະ ການຢັ້ງຢືນ ກະສິກຳສະອາດ

### ໝວດທີ 1
### ໜ່ວຍງານກ່ຽວກັບກະສິກຳສະອາດ

**ມາດຕາ 34 ໜ່ວຍງານກ່ຽວກັບກະສິກຳສະອາດ**

ໜ່ວຍງານກ່ຽວກັບກະສິກຳສະອາດ ປະກອບດ້ວຍ:

1. ໜ່ວຍງານຄຸ້ມຄອງກະສິກຳສະອາດ;
2. ໜ່ວຍງານຮັບຮອງກະສິກຳສະອາດ;
3. ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ;
4. ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ;
5. ໜ່ວຍງານຫ້ອງວິໄຈກະສິກຳສະອາດ.

**ມາດຕາ 35 ໜ່ວຍງານຄຸ້ມຄອງກະສິກຳສະອາດ**

ໜ່ວຍງານຄຸ້ມຄອງກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງກະສິກຳສະອາດ;
2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງກະສິກຳສະອາດ;
3. ຄົ້ນຄວ້າ ມາດຕະຖານກະສິກຳອິນຊີ, ມາດຕະຖານກະສິກຳທີ່ດີ, ມາດຕະຖານສິນຄ້າພືດ, ມາດຕະຖານອື່ນທີ່ກ່ຽວຂ້ອງ ແລະ ຫ້ອງວິໄຈ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

4. ຄົ້ນຄວ້າ, ສ້າງລະບຽບການ ໃຫ້ສອດຄ່ອງກັບ ມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011, ໄອເອສໂອ/ໄອອີຊີ 17065, ໄອເອສໂອ/ໄອອີຊີ 17025, ໄອເອສໂອ/ໄອອີຊີ 17020, ໄອເອສໂອ/ໄອອີຊີ 17021 ແລະ ມາດຕະຖານສາກົນອື່ນທີ່ກ່ຽວຂ້ອງ;

5. ຄົ້ນຄວ້າ ແລະ ສະເໜີການແຕ່ງຕັ້ງບຸກຄະລາກອນ ທີ່ຮັບຜິດຊອບວຽກງານ ຂອງໜ່ວຍງານຮັບຮອງກະສິກຳສະອາດ, ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ, ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ ແລະ ໜ່ວຍງານຫ້ອງວິໄຈກະສິກຳສະອາດ;

6. ຄົ້ນຄວ້າກ່ຽວກັບການສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບກະສິກຳສະອາດ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

7. ຄົ້ນຄວ້າ ສ້າງ ແລະ ພັດທະນາ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ;

8. ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;

9. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບວຽກງານກະສິກຳສະອາດ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 36 ໜ່ວຍງານຮັບຮອງກະສິກຳສະອາດ

ໜ່ວຍງານຮັບຮອງກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະເມີນການເຮັດວຽກ ຂອງໜ່ວຍງານອອກໃບຢັ້ງຢືນຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065;

2. ກວດກາຮ່ວມ ຫຼື ບໍ່ຮ່ວມ ກັບນັກກວດກາ ຂອງໜ່ວຍງານອອກໃບຢັ້ງຢືນ ຢ່າງໜ້ອຍ ຫ້າສ່ວນຮ້ອຍ ຂອງຈຳນວນລູກຄ້າ;

3. ຄົ້ນຄວ້າກ່ຽວກັບການສະເໜີຂໍອະນຸຍາດດຳເນີນທຸລະກິດດ້ານການກວດກາ ແລະ ຢັ້ງຢືນ ເພື່ອສະເໜີຕໍ່ໜ່ວຍງານຄຸ້ມຄອງ ພິຈາລະນາ;

4. ດຳເນີນງານ ແລະ ປະຕິບັດຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011;

5. ຄົ້ນຄວ້າ ສ້າງ ແລະ ພັດທະນາ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຮັບຮອງກະສິກຳສະອາດ;

6. ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານ ຮັບຮອງກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;

7. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຮັບຮອງກະສິກຳສະອາດ ຕາມການມອບໝາຍ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 37 ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ

ໜ່ວຍງານອອກໃບຢັ້ງຢືນກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ດຳເນີນການກວດກາເຕັກນິກວິຊາການ ແລະ ພິຈາລະນາອອກໃບຢັ້ງຢືນ ຕາມຂອບເຂດມາດຕະຖານ ທີ່ໜ່ວຍງານຮັບຮອງອະນຸຍາດໃຫ້ກວດກາ;

2. ພັດທະນາລະບົບການຢັ້ງຢືນ ແລະ ລາຍການກວດກາ ຂອງຕົນເອງ ບົນພື້ນຖານເງື່ອນໄຂມາດຕະຖານ ທີ່ກຳນົດ;

3. ດຳເນີນງານ ແລະ ປະຕິບັດຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17065;

4. ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານອອກໃບຢັ້ງຢືນກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;

5. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ ຂ່າວສານກ່ຽວກັບວຽກງານອອກໃບຢັ້ງຢືນກະສິກຳສະອາດ ຕາມການມອບໝາຍ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ**

ໜ່ວຍງານກວດກາເຕັກນິກວິຊາການກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ດຳເນີນການກວດກາເຕັກນິກວິຊາການ ຕາມຂອບເຂດມາດຕະຖານ ທີ່ໜ່ວຍງານຮັບຮອງອະນຸຍາດໃຫ້ກວດກາ;

2. ພັດທະນາລະບົບການກວດກາ ແລະ ລາຍການກວດກາ ຂອງຕົນເອງ ບົນພື້ນຖານເງື່ອນໄຂມາດຕະຖານທີ່ກຳນົດ;

3. ເຮັດບົດລາຍງານຜົນການກວດກາ ໃຫ້ໜ່ວຍງານອອກໃບຢັ້ງຢືນ;

4. ດຳເນີນງານ ແລະ ປະຕິບັດຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17020;

5. ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານກວດກາເຕັກນິກວິຊາການກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;

6. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ ຂ່າວສານກ່ຽວກັບວຽກງານກວດກາເຕັກນິກວິຊາການກະສິກຳສະອາດ ຕາມການມອບໝາຍ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ໜ່ວຍງານຫ້ອງວິໄຈກະສິກຳສະອາດ**

ໜ່ວຍງານຫ້ອງວິໄຈກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ດຳເນີນການວິເຄາະ ແລະ ວິໄຈ ຕາມຂອບເຂດມາດຕະຖານ ທີ່ໜ່ວຍງານຄຸ້ມຄອງກະສິກຳສະອາດອະນຸຍາດໃຫ້ວິໄຈ;

2. ພັດທະນາລະບົບການວິເຄາະ ແລະ ວິໄຈ ຂອງຕົນ ບົນພື້ນຖານເງື່ອນໄຂມາດຕະຖານທີ່ກຳນົດ;

3. ດຳເນີນງານ ແລະ ປະຕິບັດຕາມມາດຕະຖານສາກົນໄອເອສໂອ/ໄອອີຊີ 17025;

4. ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ແລກປ່ຽນບົດຮຽນ ກ່ຽວກັບວຽກງານຫ້ອງວິໄຈກະສິກຳສະອາດ ທັງພາຍໃນ ແລະ ຕ່າງປະເທດ;

5. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນຂໍ້ມູນ ຂ່າວສານກ່ຽວກັບວຽກງານຫ້ອງວິໄຈກະສິກຳສະອາດ ຕາມການມອບໝາຍ;

6. ສະຫຼຸບ ແລະ ລາຍງານຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການຢັ້ງຢືນກະສິກຳສະອາດ

**ມາດຕາ 40 ການສະເໜີຂໍການຢັ້ງຢືນກະສິກຳສະອາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍການຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ຕ້ອງຍື່ນຄຳຮ້ອງຂໍການຢັ້ງຢືນຕໍ່ໜ່ວຍງານອອກໃບຢັ້ງຢືນ ແລະ ໜ່ວຍງານກວດກາ ແລະ ປະກອບເອກະສານ ດັ່ງນີ້:

1. ໃບສະເໜີ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ (ຖ້າມີ);
3. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ;
4. ສຳເນົາ ໃບອະນຸຍາດສ້າງກຸ່ມ ຫຼື ໃບທະບຽນສະຫະກອນ (ຖ້າມີ);
5. ສຳເນົາໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ສິ່ງແວດລ້ອມ (ຖ້າມີ).

**ມາດຕາ 41 ການອອກໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ ແລະ ສິນຄ້າພືດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ພິຈາລະນາ ອອກໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ພາຍໃນກຳນົດ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບບົດລາຍງານຜົນການກວດກາ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ພາຍໃນກຳນົດເວລາດັ່ງກ່າວ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບ.

**ມາດຕາ 42 ອາຍຸການນຳໃຊ້ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ**

ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ ແລະ ກະສິກຳທີ່ດີ ມີອາຍຸ ໜຶ່ງ ປີ ນັບແຕ່ວັນ ລົງລາຍເຊັນເປັນຕົ້ນໄປ.

ການຕໍ່ອາຍຸໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ ແລະ ກະສິກຳທີ່ດີ ຕ້ອງດຳເນີນ ກ່ອນໃບຢັ້ງຢືນໝົດອາຍຸ ຫົກສິບວັນ.

ສຳລັບອາຍຸການນຳໃຊ້ ໃບຢັ້ງຢືນມາດຕະຖານສິນຄ້າພືດ ແລະ ກະສິກຳທີ່ປອດໄພ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 ການໂຈະໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ**

ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ໄດ້ຮັບໃບຢັ້ງຢືນມາດຕະຖານ;
2. ຕາມການສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບການປະຕິບັດມາດຕະຖານ ແລະ ເງື່ອນໄຂການຜະລິດກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ;
3. ດຳເນີນການຜະລິດກະສິກຳສະອາດ ບໍ່ສອດຄ່ອງກັບໃບຢັ້ງຢືນມາດຕະຖານ;
4. ບໍ່ປະຕິບັດຕາມມາດຕະຖານ ແລະ ເງື່ອນໄຂການຜະລິດ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ.

ເມື່ອມີການໂຈະ ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງ ກ່ຽວກັບການໂຈະດັ່ງກ່າວ ພ້ອມດ້ວຍເຫດຜົນ ເປັນລາຍລັກອັກສອນ.

**ມາດຕາ 44 ການຖອນໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ**

ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ໄດ້ຮັບໃບຢັ້ງຢືນມາດຕະຖານ;
2. ເອົາໃບຢັ້ງຢືນມາດຕະຖານ ໃຫ້ຜູ້ອື່ນນຳໃຊ້;
3. ບໍ່ປະຕິບັດຕາມການແຈ້ງໂຈະ;
4. ມີການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຢ່າງຮ້າຍແຮງ.

ເມື່ອມີການຖອນ ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງ ກ່ຽວກັບການຖອນດັ່ງກ່າວ ພ້ອມດ້ວຍເຫດຜົນ ເປັນລາຍລັກອັກສອນ ໃຫ້ຜູ້ໄດ້ຮັບໃບຢັ້ງຢືນມາດຕະຖານ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຊາບ.

## ພາກທີ VI
## ກາໝາຍ ແລະ ສະຫຼາກ

**ມາດຕາ 45 ການກຳນົດ ກາໝາຍ ແລະ ສະຫຼາກ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ກຳນົດກາໝາຍ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ໃຫ້ຜູ້ໄດ້ຮັບໃບຢັ້ງຢືນມາດຕະຖານ ເປັນຜູ້ນຳໃຊ້ ເພື່ອຢັ້ງຢືນຜົນຜະລິດ ແລະ ຜະລິດຕະພັນ.

ຜູ້ໄດ້ຮັບໃບຢັ້ງຢືນມາດຕະຖານ ເປັນຜູ້ກຳນົດສະຫຼາກ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ແລ້ວສະເໜີຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ.

**ມາດຕາ 46 ການນຳໃຊ້ ກາໝາຍ ແລະ ສະຫຼາກ**

ຜົນຜະລິດ ແລະ ຜະລິດຕະພັນ ກະສິກຳອິນຊີ ແລະ ກະສິກຳທີ່ດີ ລວມທັງ ສິນຄ້າພືດ ຕ້ອງຕິດກາໝາຍ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ, ຕິດສະຫຼາກ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຮັບຮອງ ເພື່ອບົ່ງບອກຂໍ້ມູນກ່ຽວກັບ ຜະລິດຕະພັນ ຕາມແຕ່ລະກໍລະນີ ຢ່າງຖືກຕ້ອງ ແລະ ຊັດເຈນ.

## ພາກທີ VII
## ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ

**ມາດຕາ 47 ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ**

ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ, ຕິດຕາມ, ກວດກາ, ຈັດເປັນລະບົບ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

**ມາດຕາ 48 ການສ້າງລະບົບຂໍ້ມູນ ຂ່າວສານ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ ລວມທັງການ ສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ ໂດຍປະສານສົມທົບ ກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ຄຸ້ມຄອງ ແລະ ນຳໃຊ້ລະບົບຂໍ້ມູນ ຂ່າວສານ ລວມທັງ ການສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າໃນລະບົບຖານຂໍ້ມູນ ຂ່າວສານ ກະສິກຳສະອາດ.

**ມາດຕາ 49 ການເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນໃນລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ສຳລັບການນຳໃຊ້ຂໍ້ມູນ ກະສິກຳສະອາດ ທີ່ເປັນອັນສະເພາະ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VIII
## ທຸລະກິດ ກ່ຽວກັບກະສິກຳສະອາດ

**ມາດຕາ 50 ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳກະຊວງກະສິກຳ ແລະ ສິ່ງແວດລ້ອມ.

**ມາດຕາ 51 ປະເພດທຸລະກິດ ກ່ຽວກັບກະສິກຳສະອາດ**

ປະເພດທຸລະກິດ ກ່ຽວກັບກະສິກຳສະອາດ ມີ ດັ່ງນີ້:

1. ການບໍລິການອອກໃບຢັ້ງຢືນ;
2. ການບໍລິການກວດກາເຕັກນິກວິຊາການ;
3. ການບໍລິການວິໄຈກະສິກຳສະອາດ;
4. ການບໍລິການໂຄສະນາກ່ຽວກັບກະສິກຳສະອາດ;
5. ທຸລະກິດປະເພດອື່ນ ທີ່ກ່ຽວຂ້ອງກັບກະສິກຳສະອາດ.

**ມາດຕາ 52 ການບໍລິການອອກໃບຢັ້ງຢືນ**

ການບໍລິການອອກໃບຢັ້ງຢືນ ດຳເນີນດ້ວຍ ການກວດກາ ແລະ ປະເມີນລະບົບການຜະລິດ ຕາມມາດຕະຖານກະສິກຳສະອາດ ເລີ່ມແຕ່ການວາງແຜນການປູກ, ຜົນຜະລິດ ແລະ ຜະລິດຕະພັນພືດ ຈົນຮອດ ການຈຳໜ່າຍ ເພື່ອລາຍງານຜົນການກວດກາ, ປະເມີນ ແລະ ພິຈາລະນາອອກໃບຢັ້ງຢືນ. ການບໍລິການອອກໃບຢັ້ງຢືນ ຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານ ໄອເອສໂອ/ໄອອີຊີ 17065.

**ມາດຕາ 53 ການບໍລິການກວດກາເຕັກນິກວິຊາການ**

ການບໍລິການກວດກາເຕັກນິກວິຊາການ ດຳເນີນດ້ວຍ ການກວດກາ ແລະ ປະເມີນ ລະບົບການຜະລິດຕາມມາດຕະຖານກະສິກຳສະອາດ ເລີ່ມແຕ່ການວາງແຜນການປູກ, ຜົນຜະລິດ ແລະ ຜະລິດຕະພັນພືດ ຈົນຮອດການຈຳໜ່າຍ ເພື່ອລາຍງານຜົນການກວດກາປະເມີນ ຕໍ່ໜ່ວຍງານອອກໃບຢັ້ງຢືນ ເພື່ອດຳເນີນການຕາມຂັ້ນຕໍ່ໄປ. ການບໍລິການກວດກາເຕັກນິກວິຊາການ ຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17020.

**ມາດຕາ 54 ການບໍລິການວິໄຈກະສິກຳສະອາດ**

ການບໍລິການວິໄຈກະສິກຳສະອາດ ດຳເນີນດ້ວຍການວິໄຈຫາສານພິດຕົກຄ້າງຈາກສານເຄມີ, ສິ່ງປົນເປື້ອນຂອງເຊື້ອຈຸລິນຊີ ແລະ ສິ່ງແປກປອມ ຕາມທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ. ການບໍລິການວິໄຈກະສິກຳສະອາດ ຕ້ອງປະຕິບັດຕາມເງື່ອນໄຂຂອງມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17025.

**ມາດຕາ 55 ການບໍລິການໂຄສະນາກ່ຽວກັບກະສິກຳສະອາດ**

ການບໍລິການໂຄສະນາກ່ຽວກັບກະສິກຳສະອາດ ຕ້ອງໃຫ້ຖືກຕ້ອງກັບ ເນື້ອໃນ ແລະ ຮູບການ ທີ່ໄດ້ຮັບອະນຸຍາດ. ສຳລັບເນື້ອໃນການໂຄສະນາ ຕ້ອງຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ຂອງຜົນຜະລິດ ແລະ ຜະລິດຕະພັນ ທີ່ໄດ້ຮັບການຢັ້ງຢືນ.

**ມາດຕາ 56 ເງື່ອນໄຂຂອງການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ**

ເງື່ອນໄຂຂອງການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ມີ ດັ່ງນີ້:

1. ທຶນ, ສຳນັກງານ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ ຢ່າງເໝາະສົມ;
2. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດ;
3. ນັກວິຊາການທີ່ມີຄວາມຮູ້ດ້ານກະສິກຳ ລະດັບຊັ້ນສູງຂຶ້ນໄປ ທີ່ມີໃບຢັ້ງຢືນການຜ່ານການປະຕິບັດວຽກງານຕົວຈິງ ສຳລັບທຸລະກິດ ກ່ຽວກັບກະສິກຳ;
4. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ.

**ມາດຕາ 57 ເອກະສານປະກອບການຂໍອະນຸຍາດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ ທີ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ກຳນົດ.

**ມາດຕາ 58 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ພາຍໃນເວລາ ສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດກາຕົວຈິງ ເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນກຳນົດເວລາດັ່ງກ່າວ.

**ມາດຕາ 59 ອາຍຸການນຳໃຊ້ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ມີອາຍຸການນຳໃຊ້ ສອງປີ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຕ້ອງດຳເນີນກ່ອນໃບອະນຸຍາດດຳເນີນທຸລະກິດໝົດອາຍຸ ຫົກສິບວັນ.

**ມາດຕາ 60 ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ຕາມ ການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບກະສິກຳສະອາດ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາ ວຽກງານກະສິກຳສະອາດ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;

7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 61 ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ເມື່ອມີການໂຈະ ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງ ກ່ຽວກັບການໂຈະດັ່ງກ່າວ ພ້ອມດ້ວຍເຫດຜົນ ເປັນລາຍລັກອັກສອນ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຊາບ.

**ມາດຕາ 62 ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ບໍ່ປັບປຸງ ແລະ ແກ້ໄຂ ບັນຫາຂອງຕົນ ຕາມການແຈ້ງໂຈະ;
2. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
3. ມີການລະເມີດກົດໝາຍ ແລະ ລະບຽບການ ຢ່າງຮ້າຍແຮງ;
4. ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍຸບເລີກ ຫຼື ໃຫ້ລົ້ມລະລາຍ ຂອງວິສາຫະກິດ.

ພາຍຫຼັງຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດແລ້ວ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕ້ອງແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງອື່ນ ທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕາມກົດໝາຍ ແລະ ລະບຽບການ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 63 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຂັບ ນາບຂູ່, ໝິ່ນປະໝາດ ການເຄື່ອນໄຫວ ຂອງຜູ້ປະກອບການ ລວມທັງການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບກະສິກຳສະອາດ;
4. ນຳໃຊ້ກາໝາຍກະສິກຳອິນຊີ, ກະສິກຳທີ່ດີ ຫຼື ສິນຄ້າພືດ ຕິດໃສ່ຜົນຜະລິດ ຫຼື ຜະລິດຕະພັນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ແອບອ້າງ, ໂຄສະນາ ຜົນຜະລິດ, ຜະລິດຕະພັນ ຫຼື ປັດໄຈການຜະລິດ ຂອງຕົນ ເປັນ ຜົນຜະລິດ, ຜະລິດຕະພັນ ຫຼື ປັດໄຈການຜະລິດ ກະສິກຳອິນຊີ ຫຼື ກະສິກຳທີ່ດີ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 64 ຂໍ້ຫ້າມ ສຳລັບຜູ້ປະກອບການ**

ຫ້າມ ຜູ້ປະກອບການ ມີພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ສ້າງອຸປະສັກ ຫຼື ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

2. ໃຫ້, ຮັບ ຫຼື ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍ ແລະ ຕາມການອະນຸຍາດ;

4. ເອົາໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ ໃຫ້ຜູ້ອື່ນນຳໃຊ້;

5. ນຳໃຊ້ກາໝາຍ, ສະຫຼາກ ຕິດໃສ່ຜົນຜະລິດ ຫຼື ຜະລິດຕະພັນ ທີ່ບໍ່ໄດ້ຮັບການຢັ້ງຢືນ ກະສິກຳ ສະອາດ ຫຼື ກະສິກຳອິນຊີ ທີ່ຢູ່ໃນໄລຍະປັບປ່ຽນ;

6. ນຳໃຊ້ກາໝາຍ ກະສິກຳອິນຊີ ແລະ ກະສິກຳທີ່ດີ ໃສ່ປ້າຍໂຄສະນາ ແລະ ຕິດໃສ່ປ້າຍຮ້ານຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;

7. ປະຕິເສດຄວາມຮັບຜິດຊອບ, ຊຸກເຊື່ອງ ປັດໄຈການຜະລິດທີ່ບໍ່ຖືກຕ້ອງ ເປັນຕົ້ນ ຢາປາບສັດຕູພືດ, ຝຸ່ນ, ແນວພັນ;

8. ໂຄສະນາ ຊວນເຊື່ອ ແລະ ແອບອ້າງ ສັບພະຄຸນຂອງ ຜົນຜະລິດ ຫຼື ຜະລິດຕະພັນ ກະສິກຳສະອາດ ເກີນຄວາມເປັນຈິງ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 65 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ເປີດເຜີຍຂໍ້ມູນ ກ່ຽວກັບກະສິກຳສະອາດ ທີ່ເປັນອັນສະເພາະ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຂໍເອົາ, ທວງເອົາ ຫຼື ຮັບ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;

4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເລີ່ນເລີ້, ຂາດຄວາມຮັບຜິດຊອບ;

5. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;

6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ບໍ່ຖືກຕ້ອງຕາມລະບຽບການ ກ່ຽວກັບຄ່າທຳນຽມ ແລະ ຄ່າ ບໍລິການ;

7. ນຳໃຊ້ລາຍຮັບວິຊາການ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ X
## ການຄຸ້ມຄອງ ແລະ ການກວດກາ ວຽກງານກະສິກຳສະອາດ

**ມາດຕາ 66 ການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງ ປະຕິບັດ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ສິ່ງແວດລ້ອມ;
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ;
4. ຄະນະກຳມະການປົກຄອງຕາແສງ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ ເປັນແຜນການ, ແຜນງານ, ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;

4. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໂດຍມີການປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

5. ສຳຫຼວດ ແລະ ກຳນົດເຂດຈຸດສຸມການຜະລິດກະສິກຳສະອາດ;

6. ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານກະສິກຳສະອາດ;

7. ຄົ້ນຄວ້າ ກຳນົດ ມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ ແລະ ສິນຄ້າພືດ ລວມທັງມາດຕະຖານອື່ນທີ່ກ່ຽວຂ້ອງ;

8. ອອກ, ໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ ແລະ ສິນຄ້າພືດ, ໃບອະນຸຍາດ ດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ;

9. ກວດກາເຕັກນິກວິຊາການ, ວິໄຈ, ອອກໃບຢັ້ງຢືນ ແລະ ໂຄສະນາ ກ່ຽວກັບກະສິກຳສະອາດ;

10. ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ;

11. ກວດກາ, ຮັບຮອງ ແລະ ຢັ້ງຢືນໜ່ວຍງານອອກໃບຢັ້ງຢືນ ແລະ ໜ່ວຍງານກວດກາ ໃຫ້ສອດຄ່ອງຕາມມາດຕະຖານສາກົນ ໄອເອສໂອ/ໄອອີຊີ 17011, ໄອເອສໂອ/ໄອອີຊີ 17065;

12. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໃນຂອບເຂດທົ່ວປະເທດ;

13. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານກະສິກຳສະອາດ;

14. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ;

15. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກະສິກຳສະອາດ;

16. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ**

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;

3. ຊຸກຍູ້ ຊາວກະສິກອນ ແລະ ຜູ້ປະກອບການ ໃຫ້ດຳເນີນການຜະລິດຕາມລະບົບມາດຕະຖານກະສິກຳສະອາດ;

4. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໂດຍມີການປະສານສົມທົບກັບພະແນກການ, ອົງການອື່ນ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ຂັ້ນເມືອງ ທີ່ກ່ຽວຂ້ອງ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານກະສິກຳສະອາດ;

6. ສະເໜີ ໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ, ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ;

7. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ;

8. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໃນຂອບເຂດນະຄອນຫຼວງ, ແຂວງ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານກະສິກຳສະອາດ;

10. ປະສານສົມທົບກັບພະແນກການ, ອົງການອື່ນ ຂັ້ນແຂວງ, ຄະນະກຳມະການປົກຄອງ ຂັ້ນເມືອງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ຕໍ່ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ຄະນະກຳມະການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;

3. ຊຸກຍູ້ ຊາວກະສິກອນ ແລະ ຜູ້ປະກອບການ ໃຫ້ດຳເນີນການຜະລິດຕາມລະບົບມາດຕະຖານກະສິກຳສະອາດ;

4. ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໂດຍມີການປະສານສົມທົບກັບຫ້ອງການ, ອົງການອື່ນ ຂັ້ນເມືອງ ແລະ ຄະນະກຳມະການປົກຄອງຕາແສງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານກະສິກຳສະອາດ;

6. ສະເໜີ ໂຈະ ຫຼື ຖອນ ໃບຢັ້ງຢືນມາດຕະຖານ ກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ, ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ;

7. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກະສິກຳສະອາດ;

8. ເຂົ້າຮ່ວມ ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ໃນຂອບເຂດເມືອງ, ນະຄອນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານກະສິກຳສະອາດ;

10. ປະສານສົມທົບກັບຫ້ອງການ, ອົງການອື່ນ ຂັ້ນເມືອງ, ຄະນະກຳມະການປົກຄອງຕາແສງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກະສິກຳສະອາດ ຕໍ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຄະນະກຳມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກຄອງຕາແສງ**

ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະສານງານກັບ ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ແລະ ບ້ານ ເພື່ອເຜີຍແຜ່ກົດໝາຍ, ລະບຽບການ, ມາດຕະຖານ ແລະ ຄູ່ມື ກ່ຽວກັບກະສິກຳສະອາດ;
2. ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບວຽກງານກະສິກຳສະອາດ;
3. ຊ່ວຍຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ຂັ້ນເມືອງ ໃນການຈັດສັນສະຖານທີ່ຜະລິດ ແລະ ຕະຫຼາດກະສິກຳອິນຊີ, ກະສິກຳທີ່ດີ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ໃນການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 72 ເນື້ອໃນການກວດກາ**

ການກວດກາວຽກງານກະສິກຳສະອາດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກະສິກຳສະອາດ;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວ ແລະ ການດຳເນີນທຸລະກິດ ກ່ຽວກັບກະສິກຳສະອາດ;
4. ການປະຕິບັດ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກະສິກຳສະອາດ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 73 ຮູບການການກວດກາ**

ການກວດກາວຽກງານກະສິກຳສະອາດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ເຊິ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ເຊິ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ເຊິ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານກະສິກຳສະອາດ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 74 ເຈົ້າໜ້າທີ່ກະສິກຳສະອາດ**

ເຈົ້າໜ້າທີ່ກະສິກຳສະອາດ ແມ່ນ ພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານປູກຝັງ ຊຶ່ງຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ໃຫ້ປະຕິບັດວຽກງານກວດກາ ຕາມມາດຕະຖານກະສິກຳອິນຊີ, ກະສິກຳທີ່ດີ, ສິນຄ້າພືດ ແລະ ກະສິກຳທີ່ປອດໄພ.

ສຳລັບ ມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ກະສິກຳສະອາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 75 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກະສິກຳສະອາດ**

ເຈົ້າໜ້າທີ່ກະສິກຳສະອາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ພິສູດ ຂໍ້ມູນທີ່ສະເໜີ ຂໍການຢັ້ງຢືນ, ກວດກາ ເຊັ່ນ ສະຖານທີ່ຜະລິດ, ສະຖານທີ່ປຸງແຕ່ງ, ບ່ອນຈຳໜ່າຍ, ສາງເກັບຮັກສາ, ການໂຄສະນາ, ການຂົນສົ່ງ, ການນຳເຂົ້າ, ການສົ່ງອອກ, ການສົ່ງຜ່ານ ແລະ ຂໍ້ມູນອື່ນ ທີ່ກ່ຽວຂ້ອງ;
2. ກວດກາການປະຕິບັດມາດຕະຖານ ກະສິກຳອິນຊີ ແລະ ກະສິກຳທີ່ດີ ໃນລະບົບການຜະລິດຂອງຜູ້ປະກອບການ;
3. ເກັບຕົວຢ່າງ ຜົນຜະລິດ ແລະ ຜະລິດຕະພັນ ເພື່ອນຳໄປວິໄຈຄຸນນະພາບ ຫຼື ນຳໃຊ້ເປັນຫຼັກຖານ;
4. ສະຫຼຸບ ແລະ ລາຍງານ ຜົນການກວດກາ ແລະ ປະກອບເອກະສານ ໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານກະສິກຳສະອາດ ພ້ອມທັງສະເໜີມາດຕະການແກ້ໄຂ ເພື່ອພິຈາລະນາ ຕາມແຕ່ລະກໍລະນີ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 76 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 78 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 79 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ກໍລະກົດ 2026 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**